**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງອຸດົມໄຊ ເລກທີ..573../ອຊ

ອຸດົມໄຊ, ວັນທີ.15.ພຶດສະພາ 2025

# ຄໍາສັ່ງ
# ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ ຕໍ່ວຽກງານທະບຽນສານ

- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍທະບຽນສານ ສະບັບປັບປຸງ ສະບັບເລກທີ 24/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ຄໍາສັ່ງ ວ່າດ້ວຍການເພີ່ມ ທະວີຄວາມເອົາໃຈໃສ່ ຕໍ່ວຽກງານທະບຽນສານ ສະບັບເລກທີ 10/ນຍ, ລົງວັນທີ 1 ເມສາ 2017
- ອີງຕາມ ໜັງສືສະເໜີ ຂອງພະແນກຍຸຕິທໍາແຂວງ ສະບັບເລກທີ 172/ພຍທ, ລົງວັນທີ 5 ພຶດສະພາ 2025.

ວຽກງານທະບຽນສານ ເປັນວຽກງານໜຶ່ງ ທີ່ມີພາລະບົດບາດສໍາຄັນຂອງຂະແໜງຍຸຕິທໍາ ໃນການຢັ້ງຢືນຄວາມຖືກຕ້ອງ ຕາມຄວາມເປັນຈິງ ແລະ ຕາມກົດໝາຍ ຂອງສັນຍາ ແລະ ເອກະສານອື່ນໆ, ແນໃສ່ເພີ່ມທະວີນິຕິທໍາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ການປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ຜ່ານການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທະບຽນສານ ເຫັນວ່າ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ຂອງສັງຄົມ ໃນການເຂົ້າເຖິງຄວາມໝາຍ, ຄວາມສໍາຄັນ, ຜົນປະໂຫຍດທີ່ຈະໄດ້ຮັບຈາກການຢັ້ງຢືນທະບຽນສານ ຂອງບັນດາຂະແໜງການ, ອົງການຈັດຕັ້ງສັງຄົມ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ, ພົນລະເມືອງລາວ ແລະ ຄົນຕ່າງປະເທດມີຫຼາຍສັນຍາ ແລະ ເອກະສານ ຍັງບໍ່ໄດ້ຮັບການຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍ ເຊິ່ງເຮັດໃຫ້ມີຫຼາຍສັນຍາ ແລະ ຫຼາຍເອກະສານບໍ່ທັນຖືກຕ້ອງ ຈຶ່ງເປັນສາເຫດໜຶ່ງ ທີ່ພາໃຫ້ເກີດມີຂໍ້ຂັດແຍ່ງ, ສ້າງຄວາມສັບສົນ ໃຫ້ແກ່ການຈັດຕັ້ງພັກ-ລັດ ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ເນື່ອງຈາກສັນຍາ ແລະ ເອກະສານນັ້ນບໍ່ຖືກຕ້ອງ ຕາມກົດໝາຍ ແລະ ຄວາມເປັນຈິງ ເປັນຕົ້ນ ພິໄນກໍາ, ລາຍເຊັນ, ລາຍໂປ້ມື, ເອກະສານສໍາເນົາ ແລະ ເອກະສານອື່ນໆ.

ເພື່ອສ້າງຄວາມຮັບຮູ້, ຄວາມເຂົ້າໃຈຂອງສັງຄົມ ກ່ຽວກັບວຽກງານທະບຽນສານ, ເຮັດໃຫ້ກົດໝາຍ ວ່າດ້ວຍທະບຽນສານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບ ໃນຂອບເຂດທົ່ວແຂວງອຸດົມໄຊ ທັງເປັນການຍົກສູງຄຸນນະພາບໃນການຢັ້ງຢືນສັນຍາ ຫຼື ເອກະສານອື່ນໆ ໃຫ້ມີຄຸນຄ່າທາງດ້ານກົດໝາຍ ເປັນຫຼັກຖານ ໃຫ້ແກ່ການພິພາກສາຂອງສານ, ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງບຸກຄົນ ນິຕິບຸກຄົນ, ການຈັດຕັ້ງປະກອບສ່ວນອັນສໍາຄັນເຂົ້າໃນການສ້າງຄວາມຍຸຕິທໍາໃນສັງຄົມ ໃຫ້ມີຄວາມເຂັ້ມແຂງ.

## ເຈົ້າແຂວງ ອອກຄໍາສັ່ງ:

1. ໃຫ້ບັນດາພະແນກການ, ອົງການລັດທຽບເທົ່າ, ອົງການຈັດຕັ້ງສັງຄົມ, ບັນດາເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີຄວາມເອົາໃຈໃສ່ ໃນການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍທະບຽນສານ ແລະ ນິຕິກໍາຕ່າງໆ ກ່ຽວກັບວຽກງານທະບຽນສານຢ່າງເຂັ້ມງວດ ໂດຍຖືເອົາການເຄົາລົບ ແລະ ປະຕິບັດກົດໝາຍ ວ່າດ້ວຍທະບຽນສານ ເປັນຂະບວນການໜຶ່ງທີ່ສໍາຄັນໃນສັງຄົມ ໃຫ້ເປັນສັງຄົມຍຸຕິທໍາ ຕາມແນວທາງຂອງພັກ-ລັດ, ປະກອບສ່ວນອັນສໍາຄັນ ເຂົ້າໃນພາລະກິດສ້າງສາ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງແຂວງອຸດົມໄຊ;
2. ໃຫ້ບັນດາພະແນກການ, ອົງການລັດທຽບເທົ່າ, ອົງການຈັດຕັ້ງສັງຄົມ, ບັນດາເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ, ເອກະຊົນ, ພົນລະເມືອງລາວ ແລະ ຄົນຕ່າງປະເທດ ຕ້ອງປະຕິບັດຢ່າງເປັນເອກະພາບ ໃນການ

ນຳເອົາສັນຍາ ແລະ ເອກະສານຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ສະບັບເລກທີ 24/ສພຊ, ລົງວັນທີ 29 ທັນວາ 2022 ມາຢັ້ງຢືນທະບຽນສານ ຊຶ່ງປະກອບມີດັ່ງນີ້:

2.1 ສັນຍາປະເພດຕ່າງໆ.

- ສັນຍາຊື້ຂາຍ, ແລກປ່ຽນ, ເຊົ່າຊື້ ແລະ ມອບ, ໂອນ ພາຫະນະທີ່ມີທະບຽນທຸກປະເພດ;
- ສັນຍາຊື້ຂາຍ, ແລກປ່ຽນ, ເຊົ່າ ແລະ ມອບ, ໂອນ ອະສັງຫາລິມະຊັບ (ທີ່ດິນ, ເຮືອນ);
- ສັນຍາກູ້ຢືມ ທີ່ມີການຄ້ຳປະກັນດ້ວຍອະສັງຫາລິມະຊັບ ຫຼື ພາຫະນະທີ່ມີທະບຽນ;
- ສັນຍາ ຮຸ້ນສ່ວນ;
- ສັນຍາ ຊື້ ຂາຍ, ມອບ, ໂອນຮຸ້ນ ຫຼື ກິດຈະການທຸກປະເພດ;
- ສັນຍາ ສຳປະທານ;
- ສັນຍາ ຮັບເໝົາກໍ່ສ້າງ-ສ້ອມແປງໂຄງລ່າງພື້ນຖານ, ສະໜອງວັດຖຸອຸປະກອນ ແລະ ສັນຍາອື່ນໆ ທີ່ກ່ຽວຂ້ອງກັບໂຄງການລົງທຶນຂອງລັດ;
- ສັນຍາອື່ນໆ ທີ່ກົດໝາຍກ່ຽວຂ້ອງກຳນົດ ໃຫ້ມາຢັ້ງຢືນທະບຽນສານ ແລະ ຕາມທີ່ກຳນົດໄວ້ໃນປະມວນກົດໝາຍແພ່ງ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງ;
- ນອກຈາກສັນຍາທີ່ກ່າວມາຂ້າງເທິງແລ້ວ ສັນຍາອື່ນໆ ກໍສາມາດນຳສະເໜີຂໍຢັ້ງຢືນທະບຽນສານໄດ້.

2.2 ປະເພດເອກະສານ.

- ການແປພາສາ;
- ກຳມະສິດ ກ່ຽວກັບສິນສົມສ້າງ ຫຼື ຊັບເດີມຂອງຄູ່ຜົວເມຍ;
- ເອກະສານສະບັບສຳເນົາຖ່າຍ ແມ່ນເອກະສານທີ່ຖ່າຍຈາກສະບັບຕົ້ນເຊັ່ນ: ໃບປະກາດ, ໃບຄະແນນ, ບັດປະຈຳຕົວ, ປື້ມສຳມະໂນຄົວ ແລະ ເອກະສານອື່ນໆ;
- ລາຍເຊັນ ຫຼື ລາຍໂປ້ມື;
- ຮູບຖ່າຍທຽບກັບຕົວບຸກຄົນ;
- ເວລາ ແລະ ສະຖານທີ່ຍື່ນເອກະສານ;
- ພິໄນກຳ;
- ເອກະສານກ່ຽວກັບມູນມໍຣະດົກ;
- ເອກະສານອື່ນໆ ກ່ຽວພັນກັບສາຍພົວພັນທາງແພ່ງ.

2.3 ສັນຍາກູ້ຢືມເງິນຈາກທະນາຄານ ແລະ ສະຖາບັນການເງິນຄື:

ສັນຍາກູ້ຢືມ ແລະ ສັນຍາຄ້ຳປະກັນເງິນກູ້ ຂອງທະນາຄານ ແລະ ສະຖາບັນຈຸລະພາກທີ່ມີການຄ້ຳປະກັນດ້ວຍອະສັງຫາລິມະຊັບ, ບັນຊີເງິນຝາກ ແລະ ດ້ວຍຊັບອື່ນໆ ທຸກຄັ້ງຕ້ອງໄດ້ຢັ້ງຢືນຈາກທະບຽນສານ;

- ສຳລັບສັນຍາກູ້ຢືມຈາກທະນາຄານ ແລະ ສະຖາບັນການເງິນຈຸລະພາກທີ່ມີການຄ້ຳປະກັນດ້ວຍອະສັງຫາລິມະຊັບທີ່ມີມູນຄ່າ 5 ຕື້ຂຶ້ນໄປ ຕ້ອງໃຫ້ຂະແໜງທີ່ກ່ຽວຂ້ອງ ແລະ ທະບຽນສານ ເຂົ້າຮ່ວມກວດກາ ແລະ ປະເມີນຫຼັກຊັບຕົວຈິງ ກ່ອນການຢັ້ງຢືນ.

**3.** ທຸກສັນຍາ ຫຼື ເອກະສານຕ່າງໆ ທີ່ຖືກຕ້ອງ, ສອດຄ່ອງ ແລະ ມີຄຸນຄ່າທາງດ້ານກົດໝາຍນັ້ນ ຕ້ອງໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ຈາກອົງການທະບຽນສານເທົ່ານັ້ນ ໃນກໍລະນີສັນຍາ ຫຼື ເອກະສານ ທີ່ຍັງບໍ່ໄດ້ຮັບການຢັ້ງຢືນຈາກອົງການທະບຽນສານນັ້ນ ໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ແນະນຳບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໄປຢັ້ງຢືນຄວາມຖືກຕ້ອງ ນຳອົງການທະບຽນສານບ່ອນທີ່ມີຫ້ອງການຕັ້ງຢູ່, ກ່ອນໝົດອາຍຸຂອງສັນຍາ;

**4.** ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ນຳເອົາສັນຍາ ຫຼື ເອກະສານຕ່າງໆ ມາຢັ້ງຢືນຄວາມຖືກຕ້ອງ ທາງດ້ານກົດໝາຍ ນຳອົງການທະບຽນສານນັ້ນ ຕ້ອງໄດ້ເສຍຄ່າທຳນຽມ ແລະ ຄ່າບໍລິການ ຕາມກົດໝາຍ ວ່າດ້ວຍທະບຽນສານ ແລະ ລັດຖະບັນຍັດ ຂອງປະທານປະເທດ ທີ່ປະກາດໃຊ້ ແຕ່ລະໄລຍະ;

**5.** ພະແນກຍຸຕິທຳ ແລະ ຫ້ອງການຍຸຕິທຳເມືອງ ຕ້ອງເພີ່ມທະວີຄວາມເອົາໃຈໃສ່ ປະສານສົມທົບ ແລະ ຊຸກຍູ້ ບັນດາພະແນກການ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ຫ້ອງການອ້ອມຂ້າງເມືອງ ໃນການໂຄສະນາເຜີຍແຜ່ກົດໝາຍ ວ່າດ້ວຍທະບຽນສານ, ນິຕິກຳ ກ່ຽວກັບວຽກງານທະບຽນສານ ໃຫ້ກວ້າງຂວາງ ແລະ ເລິກເຊິ່ງ ເພື່ອໃຫ້ບັນດາຂະແໜງການ, ອົງການ ແລະ ພົນລະເມືອງລາວ ແລະ ຄົນຕ່າງປະເທດ ໄດ້ຮັບຮູ້ ແລະ ເຂົ້າໃຈເຖິງຄວາມໝາຍ, ຄວາມສຳຄັນ, ຜົນປະໂຫຍດ ທີ່ຈະໄດ້ຮັບຈາກການຢັ້ງຢືນຄວາມຖືກຕ້ອງຂອງບັນດາສັນຍາ ຫຼື ເອກະສານຕ່າງໆ ໂດຍອົງການທະບຽນສານ;

**6.** ໃຫ້ອົງການປົກຄອງແຂວງ, ອົງການປົກຄອງເມືອງ ເອົາໃຈໃສ່ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ວຽກງານທະບຽນສານ ໃນຂັ້ນຂອງຕົນ, ປັບປຸງໃຫ້ມີຄວາມໜັກແໜ້ນ ເຂັ້ມແຂງທາງດ້ານເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ແນໃສ່ຮັບປະກັນ ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ຖືກຕ້ອງ ຕາມທີ່ ກຳນົດໄວ້ໃນກົດໝາຍ ວ່າດ້ວຍທະບຽນສານ;

**7.** ໃຫ້ພາກສ່ວນທີ່ກ່ຽວຂ້ອງ ນັບທັງຂັ້ນແຂວງ ແລະ ຂັ້ນເມືອງ ເພີ່ມທະວີຄວາມເອົາໃຈໃສ່ ໃກ້ຊິດຕິດແທດ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງເຕັມສ່ວນ ແນໃສ່ ຮັບປະກັນ ການບໍລິການສັງຄົມດ້ວຍຄວາມວ່ອງໄວ, ຖືກຕ້ອງ, ຊັດເຈນ ແລະ ມີປະສິດທິຜົນສູງ, ປະກອບສ່ວນໃນ ການພັດທະນາເສດຖະກິດ-ສັງຄົມ ພ້ອມກັນນັ້ນ, ກໍ່ເອົາໃຈໃສ່ຄຸ້ມຄອງລາຍຮັບ ຈາກຄ່າທຳນຽມ ແລະ ຄ່າບໍລິການ ໃນ ການຢັ້ງຢືນສັນຍາ ຫຼື ເອກະສານຕ່າງໆ ໃຫ້ຖືກຕ້ອງ, ສອດຄ່ອງ ກັບກົດໝາຍ ແລະ ລະບຽບການເງິນວາງອອກ;

**8.** ໃຫ້ພະແນກຍຸຕິທຳ ຂຶ້ນແຜນ ໃນການສະເໜີກໍ່ສ້າງ, ບຳລຸງ ແລະ ຍົກລະດັບວິຊາສະເພາະ ໃຫ້ພະນັກງານທະ ບຽນສານຂັ້ນຕ່າງໆ ດ້ວຍຫຼາຍຮູບການ ເປັນຕົ້ນ ການຝຶກອົບຮົມ ໄລຍະສັ້ນ, ໄລຍະຍາວ ເພື່ອໃຫ້ໄດ້ຜູ້ຊຳນານງານ ຫຼື ຜູ້ຊ່ຽວຊານ ໃນວຽກງານດັ່ງກ່າວ ແນໃສ່ຮັບປະກັນ ຍົກສູງຄຸນນະພາບ ຂອງວຽກງານທະບຽນສານ, ຮັບປະກັນການສະ ໜອງຂໍ້ມູນຊັດເຈນ ໃຫ້ແກ່ການດຳເນີນຄະດີ ຕາມຂະບວນການຍຸຕິທຳ ມີຄວາມວ່ອງໄວ ແລະ ຖືກຕ້ອງ ທັງຮັບປະກັນ ໃຫ້ແກ່ສານຕັດສິນ ໃຫ້ມີຄວາມເຂັ້ມງວດ ແລະ ສັກສິດຫຼາຍຂຶ້ນ;

**9.** ມອບໃຫ້ພະແນກຍຸຕິທຳ ເປັນເສນາທິການ ໃຫ້ແກ່ອົງການປົກຄອງແຂວງ ແລະ ເປັນເຈົ້າການປະສານສົມ ທົບ ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ, ພ້ອມທັງສະຫຼຸບ, ລາຍງານໃຫ້ຂັ້ນເທິງຢ່າງເປັນ ປົກກະຕິ ເພື່ອຊາບ ແລະ ມີທິດຊີ້ນຳ;

**10.** ພະແນກການ, ອົງການລັດທຽບເທົ່າ, ເຈົ້າເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ;

**11.** ຄຳສັ່ງ ສະບັບນີ້ ປ່ຽນແທນ ຄຳສັ່ງ ສະບັບເລກທີ 240/ຈຂ.ອຊ, ລົງວັນທີ 20 ມີນາ 2017 ແລະ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນເປັນຕົ້ນໄປ.

ເຈົ້າແຂວງ

ບຸນຄົງ ຫຼ້າຈຽມພອນ